**ວັນພະຫັດສັກສິດ**

**ມິຊຊາຕັ້ງສິນມະຫາສະໜິດ**

**ວັນທີ 9 ເມສາ 2020**



**ພຣະວໍລະສານໂດຍນັກບຸນຢວງ 13, 1-15**

ກ່ອນສະຫລອງປາສກາ, ພຣະເຢຊູເຈົ້າຊົງຊາບວ່າ ວັນເວລາທີ່ພຣະອົງຈະຕ້ອງຈາກໂລກ ເມືອຫາພຣະບິດາໄດ້ມາເຖິງແລ້ວ, ຍ້ອນພຣະອົງໄດ້ຮັກພວກຄົນຂອງພຣະອົງ ທີ່ຍັງຢູ່ໃນໂລກ, ພຣະອົງໄດ້ຮັກພວກເຂົາ ຈົນສຸດຂີດ. ຮັບອາຫານແລ້ວ, ແລະໃນເວລານັ້ນ ຜີປີສາດເຂົ້າບັນດົນຫົວໃຈ ຂອງຢູດາ ອິສກາຣີອົດ ລູກຊາຍຂອງຊີມອນ ໃຫ້ຊອກຫາທາງມອບພຣະອົງ, ແລະຍ້ອນຮູ້ຈັກວ່າ ພຣະບິດາໄດ້ມອບທຸກຢ່າງໄວ້ ໃນພຣະຫັດຂອງພຣະອົງ, ທັງຮູ້ຈັກວ່າ ພຣະອົງມາຈາກພຣະເປັນເຈົ້າ ແລະຈະຫລົບຄືນເມືອຫາພຣະເປັນເຈົ້າ, ພຣະອົງຈຶ່ງລຸກຂຶ້ນຈາກໂຕະຮັບອາ-ຫານ ແກ້ເສື້ອອອກ, ເອົາແພມັດແອວ, ຖອກນ້ຳໃສ່ຊາມ, ແລ້ວລົງມືລ້າງເທົ້າ ໃຫ້ພວກລູກສິດ, ພ້ອມທັງເອົາແພທີ່ພຣະອົງມັດແອວນັ້ນ ມາເຊັດ.

ເມື່ອພຣະອົງມາຮອດຊີມອນເປໂຕຣ, ເປໂຕຣທູນວ່າ: “ພຣະອົງຈະມາລ້າງເທົ້າ ໃຫ້ຂ້າ ນ້ອຍບໍ?” ພຣະເຢຊູເຈົ້າກ່າວຕອບວ່າ: “ສິ່ງທີ່ເຮົາກະທຳຢູ່ ດຽວນີ້, ເຈົ້າຍັງບໍ່ທັນ ເຂົ້າໃຈໄດ້, ເຈົ້າຈະເຂົ້າໃຈ ໃນພາຍຫລັງ.” ເປໂຕຣທູນ ຕໍ່ໄປວ່າ: “ບໍ່ໄດ້, ຂ້ານ້ອຍບໍ່ຍອມ ໃຫ້ພຣະອົງລ້າງເທົ້າ ເປັນເດັດຂາດ.” ພຣະເຢຊູເຈົ້າກ່າວວ່າ: “ຖ້າເຮົາບໍ່ລ້າງໃຫ້ເຈົ້າ, ເຈົ້າກໍຈະບໍ່ມີສ່ວນນຳເຮົາ.” ຊີມອນ ເປໂຕຣ ເລີຍທູນວ່າ: “ດັ່ງນີ້ ບໍ່ແມ່ນແຕ່ລ້າງເທົ້າເທົ່ານັ້ນ, ຂໍພຣະອົງລ້າງທັງມື ແລະຫົວໃຫ້ຂ້ານ້ອຍດ້ວຍ.” ພຣະເຢຊູເຈົ້າກ່າວຕອບວ່າ: “ຜູ້ທີ່ຫາກໍອາບນ້ຳມາໃໝ່ໆ ຕ້ອງການລ້າງແຕ່ເທົ້າເທົ່ານັ້ນ, ຍ້ອນວ່າ ເຂົາໄດ້ສະອາດໝົດຕົນ ຕົວແລ້ວ. ສ່ວນພວກເຈົ້ານັ້ນ ສະອາດບໍລິສຸດແລ້ວ, ແຕ່ບໍ່ໝົດທຸກຄົນ.” ຍ້ອນພຣະອົງຊາບດີວ່າ ຜູ້ໃດຈະມອບພຣະອົງ, ພຣະອົງຈຶ່ງກ່າວວ່າ: “ພວກເຈົ້າສະອາດບໍລິສຸດຫາກບໍ່ໝົດທຸກຄົນ.”

ເມື່ອເວລາລ້າງເທົ້າ ໃຫ້ພວກເຂົາສຳເລັດແລ້ວ, ພຣະອົງກໍຊົງຫົ່ມເສື້ອ, ສະເດັດໄປ ປະທັບຢູ່ທີ່ເດີມກ່າວວ່າ: “ພວກເຈົ້າເຂົ້າໃຈ ເຮົາໄດ້ ກະທຳສິ່ງໃດ ໃຫ້ພວກເຈົ້າບໍ ? ພວກເຈົ້າເອີ້ນເຮົາວ່າ ພຣະອາຈາ ແລະພຣະເຈົ້າກໍຖືກຕ້ອງດີ, ເຮົາແມ່ນຄືພວກເຈົ້າເວົ້າແທ້. ຖ້າວ່າ ເຮົາຜູ້ເປັນ ພຣະເຈົ້າ ແລະອາຈາໄດ້ລ້າງເທົ້າໃຫ້ພວກເຈົ້າ, ພວກເຈົ້າເອງ, ພວກເຈົ້າກໍຕ້ອງລ້າງເທົ້າ ໃຫ້ກັນແລະກັນດ້ວຍ. ເຮົາໄດ້ໃຫ້ແບບຢ່າງ ແກ່ພວກເຈົ້າ ເພື່ອໃຫ້ພວກເຈົ້າທຳຕາມ ທີ່ເຮົາເອງໄດ້ກະທຳນັ້ນແລ.”

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ຢຮ 13, 1-15**

ບົດອ່ານທີໜຶ່ງຂອງວັນນີ້ຈາກໜັງສືອົບພະຍົບໄດ້ເລົ່າໃຫ້ພວກເຮົາຮູ້ເຖິງການຕຽມອາຫານປາສກາຂອງປະຊາກອນອິສຣາແອນກ່ອນທີ່ພວກເຂົາຈະຖືກປົດປ່ອຍອອກຈາກການເປັນຂ້ອຍທາດຂອງປະເທດເອຢິບ. ອົງປະກອບທີ່ສຳຄັນຂອງງານລ້ຽງປາສການີ້ຄື ແກະຫລືແບ້ເຖິກໂຕໜຶ່ງອາຍຸໜຶ່ງປີ, ບໍ່ມີຕຳນິ. ຄອບຄົວລະໂຕ. ປະຊາກອນອິສຣາແອນຈະກິນຊີ້ນແກະຕົວນີ້ໃຫ້ໝົດໃນຄືນນັ້ນ. ສ່ວນເລືອດຂອງມັນໃຊ້ເພື່ອທາກົບປະຕູເຮືອນບ່ອນພວກເຂົາຢູ່ ອັນເປັນເຄື່ອງໝາຍຈຳແນກລະຫວ່າງປະຊາກອນຂອງພຣະເຈົ້າແລະຊົນຊາດເອຢິບ. ເພາະພຣະເຈົ້າຈະຂ້າລູກຫົວປີທັງໝົດຂອງຄົນແລະສັດໃນປະເທດເອຢິບ ແລະຈະລົງໂທດພຣະຕ່າງໆຂອງພວກເຂົາດ້ວຍ. ແຕ່ເມື່ອພຣະອົງເຫັນເລືອດແກະທີ່ວົງກົບປະຕູເຮືອນຂອງຊາວອິສຣາແອນພຣະອົງຈະບໍ່ທຳຮ້າຍພວກເຂົາ.

ຈາກນັ້ນໃນພຣະວໍລະສານ,ນັກບຸນຢວງກໍເລົ່າໃຫ້ພວກເຮົາຮູ້ເຖິງອາຫານຄ່ຳເທື່ອສຸດທ້າຍຂອງພຣະເຢຊູເຈົ້າກັບພວກລູກສິດຂອງພຣະອົງ ກ່ອນວັນທີ່ພຣະອົງຈະຖືກທໍລະມານແລະຕາຍ. ອາຫານໃນພາເຂົ້ານີ້ບໍ່ແມ່ນແກະແລະເລືອດຂອງມັນອີກ ແຕ່ແມ່ນເນື້ອແລະໂລຫິດຂອງພຣະເຢຊູເຈົ້ານັ້ນເອງ. ນັກບຸນເປົາໂລໃນບົດອ່ານທີສອງໄດ້ເລົ່າຄືນຄຳເວົ້າແລະການກະທຳຂອງພຣະເຢຊູເຈົ້າໃນອາຫານຄ່ຳກັບພວກລູກສິດຂອງພຣະອົງວ່າ: "ພຣະເຢຊູເຈົ້າຊົງຈັບເອົາປັງ, ຊົງໂມທະນາຄຸນແລະບິອອກພ້ອມທັງກ່າວວ່າ: ນີ້ແມ່ນກາຍຂອງເຮົາທີ່ຈະຖືກມອບເພື່ອພວກເຈົ້າ". ຈາກນັ້ນພຣະອົງກໍຊົງຈັບເອົາຈອກນ້ຳອະງຸ່ນພ້ອມທັງກ່າວວ່າ: "ນີ້ແມ່ນເລືອດຂອງເຮົາ, ແມ່ນພັນທະສັນຍາໃໝ່. ຈົ່ງກະທຳກິດຈະການນີ້ເພື່ອເປັນທີ່ລະລຶກເຖິງເຮົາ". ພວກລູກສິດບໍ່ເຂົ້າໃຈສິ່ງທີ່ພຣະເຢຊູເຈົ້າກ່າວແລະກະທຳໃນເວລານັ້ນ. ເໝືອນກັບນັກບຸນເປໂຕທີ່ບໍ່ເຂົ້າໃຈເປັນຫຍັງພຣະເຢຊູເຈົ້າຕ້ອງລ້າງເທົ້າໃຫ້ພວກລູກສິດແລະໃຫ້ຕົນເອງດ້ວຍ. ເຫດການເລົ່ານີ້ຈະປະຈັກແຈ້ງອອກມາກໍຕໍ່ເມື່ອພຣະເຢຊູເຈົ້າຖືກທໍລະມານ, ຕາຍແລະກັບເປັນຄືນມາໃນວັນທີສາມ. ເພາະພວກລູກສິດສາມາດຈື່ຈຳພຣະເຢຊູເຈົ້າໄດ້ຫລັງຈາກທີ່ພຣະອົງໄດ້ກັບເປັນຄືນມາຈາກຄວາມຕາຍ ກໍຍ້ອນເວລາພຣະອົງຮັບປະທານອາຫານຮ່ວມກັບພວກເຂົາຢູ່ຂ້າງທະເລຕີເບລີອັດ (ຢຮ 21, 12).

ສຳລັບພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າກໍເຊັ່ນດຽວກັນ, ມິຊຊາບູຊາເປັນສິນສັກສິດແລະເປັນເຄື່ອງໝາຍທີ່ທຳໃຫ້ພວກເຮົາຮູ້ຈັກແລະເຫັນການປະທັບຢູ່ຂອງພຣະເຢຊູເຈົ້າຢ່າງແທ້ຈິງໃຕ້ເພດເຂົ້າໜົມປັງອັນແມ່ນພຣະກາຍຂອງພຣະອົງແລະໃຕ້ເພດນ້ຳອະງຸ່ນອັນແມ່ນໂລຫິດສັກສິດຂອງພຣະອົງ. ໂລຫິດນີ້ແມ່ນພັນທະສັນຍາໃໝ່ທີ່ພຣະອົງໄດ້ໄຫລລົ່ງຢູ່ບົນກາງເຂນເພື່ອລຶບລ້າງບາບໂທດຂອງພວກເຮົາ. ແລະທຸກຄັ້ງທີ່ພວກເຮົາຮ່ວມບູຊາມິຊຊາພວກເຮົາກໍທຳໃຫ້ການກະທຳແລະຄຳເວົ້າຂອງພຣະເຢຊູເຈົ້າໃນມື້ອາຫານຄ່ຳເທື່ອສຸດທ້າຍນັ້ນເປັນຈິງແລະເປັນປັດຈຸບັນໃນຊີວິດຂອງພວກເຮົາ.

ຂໍໃຫ້ວັນພະຫັດສັກສິດນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງສິນແຫ່ງຄວາມຮັກທີ່ພຣະເຢຊູເຈົ້າໄດ້ຕັ້ງໄວ້ເພື່ອປະທັບຢູ່ກັບພວກເຮົາໃນບູຊາມິຊຊາຈົນເຖິງເວລາພຣະອົງຈະສະເດັດກັບມາໃໝ່. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ